# ພິທີສະເຫຼີມສະຫຼອງວັນສ້າງຕັ້ງ ທຄຕລ ສາຂາ ໄຊຍະບູລີ ຄົບຮອບ 10 ປີ

## (13/06/2008 - 13/06/2018)

ໃນມື້ວັນທີ 16 ມິຖຸນາ 2018 ທີ່ຜ່ານມານີ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາ ໄຊຍະບູລີ ໄດ້ຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງສາຂາຄົບຮອບ 10 ປີ ຂຶ້ນຢ່າງເປັນຂະບວນຟົດຟື້ນ. ເຊິ່ງໃນຕອນເຊົ້າໄດ້ມີພິທີຕັກບາດ (ພຣະ 9 ອົງ) ຢູ່ທີ່ ສຳນັກງານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາຂາ ໄຊຍະບູລີ ແລະ ໄດ້ຈັດພາເຂົ້າສາມັກຄີໃນຕອນບ່າຍ ຂອງວັນດຽວກັນ ໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ພົງສະຫວັນ ສິດທະວົງ ເຈົ້າແຂວງ ແຂວງ ໄຊຍະບູລີ, ທ່ານ ນາງ ບຸນພັກ ອິນທະປັນຍາ ຮອງເຈົ້າແຂວງ ແຂວງ ໄຊຍະບູລີ, ທ່ານ ຄຳຊ່ຽນ ມິ່ງບຸບຜາ ຄະນະອຳນວຍການ ທຄຕລ ແລະ ທ່ານ ບຸນລ້ອມ ພົງຈະເລີນ ຮອງຫົວໜ້າ ທຫລ ສາຂາພາກເໜືອ ແຂວງ ຫຼວງພະບາງ. ນອກນັ້ນຍັງມີບັນດາພະແນກການອ້ອມຂ້າງແຂວງ, ຫົວໜ້າ ທຄຕລ ສາຂາ ຫຼວງພະບາງ ແລະ ສາຂາ ບໍ່ແກ້ວ ພ້ອມດ້ວຍລູກຄ້າ, ແຂກທີ່ມີກຽດ ແລະ ພະນັກງານ ທຄຕລ ສາຂາ ໄຊຍະບູລີ ກໍ່ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີອັນສະຫງ່າລາສີນີ້ ທ່ານ ບຸນຍົງ ດາວສຸກ ຫົວໜ້າ ທຄຕລ ສາຂາ ໄຊຍະບູລີ ກໍ່ໄດ້ຂຶ້ນສະຫຼຸບຜົນງານໃນຕະຫຼອດໄລຍະ10 ປີ ຜ່ານມາ ແລະ ລາຍງານຜົນການດຳເນີນທຸລະກິດ ທ່າມກາງບັນຍາກາດຄວາມປິຕິຍິນດີ ແລະ ຊົມເຊີຍຜົນສຳເລັດທີ່ຍາດມາໄດ້.








ຂຽນຂ່າວ : ທ່ານ ສຸມິນທາ ໄຊພິບູນ ຮູບພາບໂດຍ : ທ້າວ ສຸລິວັນ ສຸກຈັນດີ